ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 20120107/ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 08 ທັນວາ 2020

ແຈ້ງການ

ເຖິງ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ;
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ການແຕກຮຸ້ນ (stock split) ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

- ອີງຕາມ ໜັງສືສະເໜີຮຽກໃຫ້ເປີດເຜີຍຂໍ້ມູນເພີ່ມເຕີມກ່ຽວກັບການຕັດສິນໃຈແຕກຮຸ້ນ (split par) ສະບັບເລກທີ 686/ ຕລຊລ, ລົງວັນທີ 5 ພະຈິກ 2020

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມາຍັງທ່ານໃຫ້ຊາບວ່າກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປີ 2020 ຈັດຂຶ້ນເມື່ອວັນທີ 4 ທັນວາ 2020 ມີມະຕິເຫັນດີໃຫ້ບໍລິສັດ ແຕກຮຸ້ນ (Stock Split) ແລະ ໃຫ້ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ (Promotors) ຂອງບໍລິສັດ ໃຫ້ສາມາດເຄື່ອນໄຫວໃນກະດານຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວນັ້ນ ບໍລິສັດຂໍຊີ້ແຈ້ງທຳຄວາມເຂົ້າໃຈແກ່ນັກລົງທຶນເຖິງວັດຖຸປະສົງໃນການດຳເນີນການດັ່ງນີ້:

1. ແຕກຮຸ້ນ (Stock Split)
   a. ຈຸດປະສົງ
      i. ບໍລິສັດເຫັນວ່າເປັນທາງເລືອກໜຶ່ງໃນການເພີ່ມສະພາບຄ່ອງໃຫ້ແກ່ການຊື້-ຂາຍຮຸ້ນຂອງ ມຫທຊ ໃນ ຕລຊລ ເນື່ອງຈາກມີຈຳນວນຮຸ້ນເພີ່ມຂຶ້ນ ແລະ ລາຄາຮຸ້ນຫຼຸດລົງ ເຊິ່ງຈະສາມາດດຶງດູດຜູ້ລົງທຶນລາຍຍ່ອຍ ມາລົງທຶນໃນຮຸ້ນຂອງ ມຫທຊ ໄດ້ງ່າຍຂຶ້ນ
      ii. ຜູ້ລົງທຶນທີ່ມີເງິນລົງທຶນບໍ່ຫຼາຍ ກໍ່ສາມາດລົງທຶນໃນຮຸ້ນ ຂອງບໍລິສັດໄດ້
      iii. ເພີ່ມຈຳນວນຜູ້ຖືຮຸ້ນລາຍຍ່ອຍໃນປະເທດໃຫ້ເພີ່ມຫຼາຍຂຶ້ນ ເນື່ອງຈາກປະຈຸບັນບໍລິສັດມີຜູ້ຖືຮຸ້ນຈາກຕ່າງປະເທດ ຜ່ານບັນຊີຂອງບໍລິສັດຫຼັກຊັບ (Omnibus) ເຊິ່ງຖືເປັນຈຳນວນຜູ້ຖືຮຸ້ນລາຍດຽວ
   b. ການປ່ຽນແປງກ່ອນ ແລະ ຫຼັງດຳເນີນການ

	ປະຈຸບັນ	ຫຼັງປ່ຽນແປງ
ມູນຄ່າກຳນົດ (Par Value)	1,000 ກີບ	100 ກີບ
ຈຳນວນຮຸ້ນ	40,000,000 ຮຸ້ນ	400,000,000 ຮຸ້ນ

ມູນຄ່າທຶນຈົດທະບຽນ	40,000,000,000 ກີບ	40,000,000,000 ກີບ
ລາຄາຕະຫຼາດ (ເມື່ອວັນທີ 1 ທັນວາ 2020) *ປະມານການ ຕາມສັດສ່ວນໂດຍບໍ່ທັນປັບຕາມເກນລາຄາຂຶ້ນ-ລົງ ຕາມລະບຽບຂອງຕະຫຼາດ	2,790 ກີບ	279 ກີບ*

2. ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ (Promoters) ຂອງບໍລິສັດ ໃຫ້ສາມາດເຄື່ອນໄຫວໃນກະດານຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

a. ຈຸດປະສົງ

i. ບໍລິສັດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ແຕ່ຮຸ້ນຂອງຜູ້ສ້າງຕັ້ງ (Promoters) ຍັງບໍ່ໄດ້ນຳຝາກເຂົ້າໃນລະບົບຂອງຕະຫຼາດ ເມື່ອມີການຈ່າຍເງິນປັນຜົນໃຫ້ແກ່ຮຸ້ນສ້າງຕັ້ງຍັງບໍ່ສາມາດເຮັດຜ່ານລະບົບຂອງຕະຫຼາດຫຼັກຊັບລາວໄດ້

ii. ຮຸ້ນຂອງຜູ້ສ້າງຕັ້ງ (Promoters) ຄົບກຳນົດຫ້າມໂອນຂາຍຮຸ້ນ ເປັນໄລຍະເວລາ 2 ປີ ນັບຈາກວັນທີບໍລິສັດປ່ຽນເປັນບໍລິສັດມະຫາຊົນ ແລະ ໄດ້ຂຶ້ນທະບຽນວິສາຫະກິດແລ້ວ ດັ່ງນັ້ນ ຫາກຜູ້ສ້າງຕັ້ງ (Promoters) ຕ້ອງການຈະຊື້-ຂາຍຮຸ້ນຂອງຕົນ ຄວນເຮັດລາຍການຊື້-ຂາຍຜ່ານລະບົບຊື້-ຂາຍຂອງຕະຫຼາດຫຼັກຊັບລາວ

b. ການປ່ຽນແປງກ່ອນ ແລະ ຫຼັງດຳເນີນການ

	ປະຈຸບັນ	ຫຼັງການປ່ຽນແປງ
ຈຳນວນຜູ້ສ້າງຕັ້ງ (ຄົນ)	11 ຄົນ	ບໍ່ນ້ອຍກວ່າຈຳນວນທີ່ກົດໝາຍກຳນົດໄວ້
ຈຳນວນຮຸ້ນຂອງຜູ້ສ້າງຕັ້ງ (ຮຸ້ນ)	27,760,000 ຮຸ້ນ	ບໍ່ນ້ອຍກວ່າຈຳນວນທີ່ກົດໝາຍກຳນົດໄວ້
ສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ (%)	69.40 %	ບໍ່ນ້ອຍກວ່າຈຳນວນທີ່ກົດໝາຍກຳນົດໄວ້

ບໍລິສັດ ຈະເລັ່ງດຳເນີນການປ່ຽນແປງຕາມຂັ້ນຕອນທີ່ກຳນົດໄວ້ຂອງກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງ ເພື່ອໃຫ້ບັນລຸຕາມເຈດຕະນາ ຕາມມະຕິທີ່ກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິອະນຸມັດໄວ້

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຮັບຊາບດ້ວຍ.

ແຂ່ວ ຜູ້ອຳນວຍການໃຫຍ່

(ທ່ານ ມາໂນ ຕຣິລິດວີໄລ)